ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖານເອກອັກຄະລັດຖະທູດ
ສປປ ລາວ-ວໍຊິງຕັນ, ດີຊີ

2222 S Street, NW. Washington DC 20008
Tel: 202- 332- 6416; Fax: 202-332-4923

# ແຈ້ງການ

ເຖິງ : ບັນດາພໍ່ແມ່ພີ່ນ້ອງ ທີ່ເປັນພົນລະເມືອງລາວ (ຜູ້ທີ່ຖືປັດສະປໍລາວໂດຍສະເພາະ)
ທີ່ມາດຳລົງຊີວິດ ແລະ ທຳມາຫາກິນ ຢູ່ໃນສະຫະລັດອະເມລິກາ ແລະ ການາດາ

ເລື່ອງ : ການອາໃສຢູ່ສະຫະລັດອາເມລິກາ ແລະ ການາດາ ຊົ່ວຄາວ.

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວທີ່ ວໍຊິງຕັນ,ດີຊີ ຂໍແຈ້ງມາຍັງພໍ່ແມ່ ພີ່ນ້ອງຊາວລາວ ຜູ່ທີ່ຖືໜັງສືເດີນທາງຂອງ ສປປ ລາວ ທີ່ອາໃສຢູ່ສະຫະລັດອະເມລິກາ ແລະ ການາດາ ຊາບວ່າ: ຜ່ານມາເຫັນວ່າພົນ ລະເມືອງລາວ ທີ່ດຳລົງຊີວິດ ຢູ່ໃນສະຫະລັດອະເມລິກາ ແລະ ການາດາ ມີຈຳນວນບໍ່ໜ້ອຍ ທີ່ຖືກເຈົ້າໜ້າທີ່ຈັບກຸມ ຄຸມຂັງ ແລະ ຖືກເນລະເທດກັບຄືນປະເທດ ອັນເນື່ອງມາຈາກຫລາຍສາຍເຫດ,ໃນນັ້ນຕົ້ນຕໍກໍແມ່ນການ ກະທຳຜິດຕໍ່ກົດຫມາຍປະເທດເຈົ້າພາບ, ໂດຍສະເພາະແມ່ນຢູ່ກາຍກຳນົດເວລາທີ່ທາງການສະຫະລັດ ແລະ ການາດາອະນຸຍາດໃຫ້, ເອກະສານເດີນທາງໝົດກຳນົດ,ບໍ່ຕໍ່ອາຍຸ ແລະອື່ນໆ.

ດັ່ງນັ້ນ, ຈຶ່ງຂໍແນະນຳໃຫ້ພໍ່ແມ່ພີ່ນ້ອງຊາບ ແລະ ປະຕິບັດດັ່ງນີ້ :

## 1. ຕໍ່ປະເທດເຈົ້າພາບ

ເມື່ອທ່ານໄດ້ຮັບວີຊາຈາກສະຖານທູດ ສະຫະລັດປະຈຳນະຄອນຫລວງວຽງຈັນ ແລະ ເດີນທາງມາເຖິງສະຫະລັດແລ້ວ ໃຫ້ເກັບຮັກສາ ໃບແຈ້ງເຂົ້າເມືອງ (I-94) ພ້ອມກັບປັດສະປໍ ຂອງຕົນໄວ້ໃຫ້ດີ ແລະ ໃຫ້ກວດກາເບິ່ງເຈົ້າໜ້າທີ່ເພິ່ນອະນຸຍາດໃຫ້ຢູ່ຮອດ ວັນທີ ເດືອນ ປີໃດ?. ຖ້າໃກ້ຈະຫມົດກຳນົດແລ້ວກໍ ໃຫ້ຮີບຮ້ອນຕິດຕໍ່ເຈົ້າຫນ້າທີ່ ກວດຄົນເຂົ້າເມືອງ ທີ່ຢູ່ໃກ້ບ້ານທ່ານ ເພື່ອຂໍອະນຸຍາດຢູ່ຕໍ່, ຖ້າກໍລະນີເພິ່ນບໍ່ອະນຸຍາດຕໍ່ໃຫ້ກໍໃຫ້ເດີນທາງກັບ ສປປ ລາວ ຕາມກຳນົດ.

ສຳລັບທ່ານໃດ ທີ່ໄດ້ຮັບວີຊາປະເພດຄົນຕ່າງດ້າວອາໃສຢູ່ສະຫະລັດ ກໍໃຫ້ຮີບຮ້ອນ ຂໍບັດຕ່າງດ້າວ, ບັດອະນຸຍາດເຮັດວຽກ, ບັດປະກັນສັງຄົມ ແລະ ບັດຂັບຂີ່ລົດ ໃຫ້ໄດ້ພາຍໃນ 6 ເດືອນ ບໍ່ດັ່ງນັ້ນທ່ານອາດຈະຖືກເນລະເທດກັບຄືນ ສປປ ລາວ ກໍເປັນໄດ້.

2. <u>ຕໍ່ສະຖານເອກອັກຄະລັດຖະທູດ ສປປ ລາວ</u>

ເມື່ອທ່ານມາເຖິງ ສະຫະລັດ ອະເມລິກາ,ການາດາ ແລະ ມີຈຸດປະສົງຈະຢູ່ປະເທດ ນີ້ ເກີນກວ່າ 6 ເດືອນ ຂຶ້ນໄປ ໃຫ້ ທ່ານໄປລົງທະບຽນຢູ່ສະຖານທູດ ສປປ ລາວ ທີ່ວໍຊິງຕັນ,ດີຊີ, ຖ້າທ່ານຢູ່ຫ່າງໄກ ກໍໃຫ້ ອັດສຳເນົາໜັງສືຜ່ານແດນ, ຂຽນຟອມຄຳຮ້ອງຂໍບັດກົງສຸນ,ຮູບຖ່າຍ 2x2 ຈຳນວນ 2 ໃບ ແລະ ຄ່າທຳນຽມ 15 $ ສົ່ງທາງໄປສະນີ ໃຫ້ສະຖານ ທູດພິຈະລະນາລົງທະບຽນໃຫ້.

- ທຸກໆ ປີ ທ່ານຕ້ອງຂໍຕໍ່ ອາຍຸບັດລົງທະບຽນ ( ບັດກົງສຸນ ) ໜຶ່ງຄັ້ງ.
- ທຸກ ໆ ສາມປີໃດ ທ່ານຕ້ອງຂໍຕໍ່ອາຍຸໜັງສືຜ່ານແດນໜຶ່ງຄັ້ງ. (ສຳລັບໜັງສືຜ່ານແດນລຸ້ນເກົ່າ)
- ທຸກ ໆ 5-10 ປີໃດ ທ່ານຕ້ອງຂໍຕໍ່ອາຍຸໜັງສືຜ່ານແດນໜຶ່ງຄັ້ງ. (ສຳລັບໜັງສືຜ່ານແດນທີ່ໄດ້ອອກໃຫ້ນັບແຕ່ ປີ 2008 ເປັນມາ)

ລາຍລະອຽດ ເຊີນທ່ານເຂົ້າເບິ່ງໄດ້ ທີ່ WWW.laoembassy.com , ໂທ: (202) 332 6416 Ext: 205 ໃນໂມງລັດຖະການ ແຕ່ 9.00 ໂມງ - 12.00ໂມງ ແລະ ຕອນບ່າຍ ແຕ່ 13.00 ໂມງ -16.00 ໂມງ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ.

ວໍຊິງຕັນ,ວັນທີ 01 ພຶດສະພາ 2013

ຫ້ອງການສະຖານທູດ